ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້ ເລກທີ 2136/ກປ

ນະຄອນຫຼວງວຽງຈັນ, ວັນທີ 26 OCT 2011

# ຄຳສັ່ງ

## ຂອງລັດຖະມົນຕີ

## ກ່ຽວກັບການເພີ່ມທະວີຄວາມເອົາໃຈໃສ່ໃນການຄຸ້ມຄອງ ແລະກວດກາສຸຂານາໄມພືດ ທີ່ຈະສົ່ງອອກ ໃຫ້ສອດຄ່ອງກັບລະບຽບການດ້ານສຸຂານາໄມພືດຂອງປະເທດປາຍທາງ

ເຖິງ: - ທ່ານຫົວໜ້າກົມ, ກອງ ແລະສະຖາບັນອ້ອມຂ້າງກະຊວງກະສິກຳ ແລະປ່າໄມ້;
- ທ່ານຫົວໜ້າພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ ແລະນະຄອນຫຼວງວຽງຈັນ;
- ທ່ານຫົວໜ້າດ່ານປ້ອງກັນພືດຊາຍແດນ.

- ອີງຕາມກົດໝາຍວ່າດ້ວຍການປ້ອງກັນພືດ ສະບັບເລກທີ 06/ສພຊ, ລົງວັນທີ 09 ທັນວາ 2008;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 148/ນຍ, ລົງວັນທີ 10 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມການລາຍງານຂອງກົມປູກຝັງ ສະບັບເລກທີ 1198/ກປຝ, ລົງວັນທີ 17 ຕຸລາ 2011.

ວຽກງານການປ້ອງກັນພືດ ແລະກັກກັນພືດ ເປັນວຽກງານໜຶ່ງທີ່ຕິດພັນກັບນະໂຍບາຍເປີດກວ້າງການພົວພັນຮ່ວມມືກັບຕ່າງປະເທດ, ໂດຍສະເພາະແມ່ນການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ການຄົ້ນຄວ້າວິທະຍາສາດເຕັກໂນໂລຊີ ຕະຫຼອດຮອດການເຂົ້າຮ່ວມປະຕິບັດສັນຍາ-ສົນທິສັນຍາສາກົນດ້ານສຸຂານາໄມພືດ ທີ່ ສປປ ລາວ ເປັນພາຄີ.

ໃນໄລຍະຜ່ານມາ, ພວກເຮົາກໍໄດ້ມີການແລກປ່ຽນຄ້າຂາຍຜະລິດຕະພັນພືດກະສິກຳກັບພາກພື້ນ ແລະສາກົນໄດ້ເປັນຢ່າງດີ ອັນເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ; ແຕ່ເຖິງຢ່າງໃດກໍຕາມ ການແລກປ່ຽນ, ຄ້າຂາຍດັ່ງກ່າວ ບາງຄັ້ງຍັງບໍ່ທັນສອດຄ່ອງກັບລະບຽບການດ້ານສຸຂານາໄມພືດຂອງປະເທດປາຍທາງ, ເກີດມີປະກົດການທໍ້ທີ່ຕາມມາ ເຊັ່ນ: ພືດທີ່ສົ່ງອອກໄປຖືກປັບໃໝ ຫຼືຖືກລົງໂທດໃນຮູບການຕ່າງໆຈາກປະເທດປາຍທາງ.

ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການສົ່ງອອກພືດ ແລະຜູ້ດຳເນີນທຸລະກິດດ້ານສຸຂານາໄມພືດ, ຫຼີກເວັ້ນຜົນກະທົບດ້ານລົບຕໍ່ການຜະລິດພືດເປັນສິນຄ້າສົ່ງອອກຂອງ ສປປ ລາວ ໄປຕ່າງປະເທດ ໃນ

ໄລຍະສັ້ນ ແລະໄລຍະຍາວ, ທັງຮັບປະກັນໃຫ້ແກ່ການປະຕິບັດລະບຽບການສຸຂານາໄມພືດຂອງອົງການປ້ອງກັນພືດສາກົນ (IPPC), ອົງການການຄ້າໂລກ (SPS-WTO) ແລະລະບຽບການດ້ານສຸຂານາໄມພືດຂອງປະເທດປາຍທາງນັ້ນ

## ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ອອກຄຳສັ່ງ ດັ່ງນີ້:

1. ໃຫ້ກົມປູກຝັງ ປະສານສົມທົບກັບຂະແໜງການກ່ຽວຂ້ອງ ທັງໃນຂັ້ນສູນກາງ ແລະທ້ອງຖິ່ນ ເພື່ອຊອກຮູ້ຂໍ້ມູນ ແລະລະບຽບການກ່ຽວກັບການນຳເຂົ້າພືດຂອງປະເທດປາຍທາງ, ໂດຍສະເພາະແມ່ນບັນດາລາຍການ ຫຼືບັນຊີຕ້ອງຫ້າມ ຈາກສຳນັກງານທີ່ຮັບຜິດຊອບອອກອະນຸຍາດນຳເຂົ້າພືດຂອງປະເທດປາຍທາງທີ່ເປັນຄູ່ທາງການຄ້າພືດ ແລະຜະລິດຕະພັນພືດຕົ້ນຕໍຂອງ ສປປ ລາວ ເຊັ່ນ: ຣາຊະອານາຈັກໄທ, ສສ ຫວຽດນາມ, ສປ ຈີນ, ຍີ່ປຸ່ນ, ຕະຫຼາດຮ່ວມເອີຣົບ ແລະປະເທດອື່ນໆ ເພື່ອຮັບປະກັນດ້ານຂໍ້ມູນຂ່າວສານ ແລະລະບຽບການທີ່ກ່ຽວຂ້ອງ ໃຫ້ແກ່ຜູ້ປະກອບການສົ່ງອອກພືດ ແລະຜູ້ດຳເນີນທຸລະກິດດ້ານສຸຂານາໄມພືດ ໄດ້ຈັດຕັ້ງປະຕິບັດແຕ່ຫົວທີ;
2. ມອບໃຫ້ກົມປູກຝັງ ສ້າງບົດແນະນຳລະອຽດກ່ຽວກັບຂັ້ນຕອນການປະຕິບັດສຳລັບສິ່ງອອກພືດທີ່ນອນຢູ່ໃນລາຍການ ຫຼືບັນຊີຕ້ອງຫ້າມຂອງບັນດາປະເທດທີ່ເປັນຄູ່ທາງການຄ້າພືດ ແລະຜະລິດຕະພັນພືດຕົ້ນຕໍຂອງ ສປປ ລາວ; ພ້ອມທັງປະກອບຂໍ້ມູນກ່ຽວກັບສະພາບການຜະລິດ ແລະບັນຊີສັດຕູພືດ ໃຫ້ແກ່ອົງການທີ່ກ່ຽວຂ້ອງຂອງປະເທດປາຍທາງຄົ້ນຄວ້າປະເມີນຄວາມສ່ຽງຈາກສັດຕູພືດ, ຂອບເຂດເວລາ ແລະເຕັກນິກການເຈລະຈາ, ເງື່ອນໄຂປະຕິບັດສຸຂານາໄມພືດ ແລະອື່ນໆທີ່ກ່ຽວຂ້ອງ ເພື່ອໃຫ້ຜູ້ປະກອບການຂອງ ສປປ ລາວ ສາມາດໃຫ້ຄວາມຮ່ວມມືໃນທາງປະຕິບັດ;
3. ໃຫ້ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ ແລະນະຄອນຫຼວງວຽງຈັນ ສືບຕໍ່ເອົາໃຈໃສ່ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານໃຫ້ຜູ້ປະກອບການສົ່ງອອກພືດ ແລະຜະລິດຕະພັນພືດ ຕັ້ງແຕ່ຂອດການຜະລິດ ໄປຈົນເຖິງຂອດການສົ່ງອອກ, ໂດຍສະເພາະແມ່ນບັນດາລາຍການ ຫຼືບັນຊີຕ້ອງຫ້າມຈາກສຳນັກງານທີ່ຮັບຜິດຊອບອອກອະນຸຍາດນຳເຂົ້າຂອງປະເທດປາຍທາງ (ຈຸດສອບຖາມ SPS). ໃນກໍລະນີຜູ້ປະກອບການຫາກມີແຜນຜະລິດ ຫຼືສົ່ງອອກພືດທີ່ນອນຢູ່ໃນລາຍການ ຫຼືບັນຊີຕ້ອງຫ້າມຂອງປະເທດປາຍທາງ ຕ້ອງຮີບຮ້ອນເປັນເຈົ້າການປະສານສົມທົບກັບກົມປູກຝັງ ເພື່ອກະກຽມຂໍ້ມູນສະພາບການຜະລິດ ແລະສັດຕູພືດ ສົ່ງໃຫ້ປະເທດປາຍທາງປະເມີນຄວາມສ່ຽງສັດຕູພືດ ແລະກຳນົດເງື່ອນໄຂການປະຕິບັດດ້ານສຸຂານາໄມພືດ ເພື່ອໃຊ້ເປັນບ່ອນອີງໃນການພິຈາລະນາອອກອະນຸຍາດນຳເຂົ້າຂອງປະເທດປາຍທາງ;
4. ໃຫ້ດ່ານປ້ອງກັນພືດຊາຍແດນທົ່ວປະເທດ ເພີ່ມທະວີຄວາມເອົາໃຈໃສ່ໃນການກວດກາການສົ່ງອອກພືດ ແລະຜະລິດຕະພັນພືດ ຕາມຫຼັກການມາດຕະຖານສາກົນດ້ານມາດຕະການສຸຂານາໄມພືດ ຂອງສົນທິສັນຍາປ້ອງກັນພືດສາກົນ ສະບັບທີ 23 (ISPM No.23: Guidelines for inspection) ໃຫ້ມີເອກະສານຄົບຖ້ວນ ຕາມຂໍ້ກຳນົດກົດລະບຽບຂອງປະເທດປາຍທາງ; ກ່ອນສົ່ງອອກພືດ ແລະຜະລິດຕະພັນພືດ ຕ້ອງມີການຢັ້ງຢືນສຸຂານາໄມພືດ ຊຶ່ງອອກໃຫ້ໂດຍອົງການຄຸ້ມຄອງວຽກງານປ້ອງກັນພືດ ຫຼືອົງການປ້ອງກັນພືດແຫ່ງຊາດ (NPPO- National Plant Protection Organization) ໂດຍແມ່ນກົມປູກຝັງ, ຂະແໜງປູກຝັງ ແລະໜ່ວຍງານປູກຝັງເປັນເສນາທິການໃຫ້ແກ່ຂະແໜງການກະສິກຳ ແລະປ່າໄມ້ໃນຂັ້ນຂອງຕົນ;

5. ຫ້າມອອກໃບຢັ້ງຢືນສຸຂານາໄມພືດໃຫ້ແກ່ພືດ ແລະຜະລິດຕະພັນພືດທີ່ນອນຢູ່ໃນລາຍການ ຫຼືບັນຊີຕ້ອງຫ້າມຂອງປະເທດປາຍທາງ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດໃຫ້ນຳເຂົ້າເປັນກໍລະນີພິເສດຈາກອົງການທີ່ກ່ຽວຂ້ອງຂອງປະເທດປາຍທາງນັ້ນ ແລະຕ້ອງຮັບປະກັນການກວດກາ ແລະຢັ້ງຢືນສຸຂານາໄມພືດ ໃຫ້ເປັນໄປຕາມເງື່ອນໄຂດ້ານສຸຂານາໄມພືດທີ່ກຳນົດໃຫ້ຕາມການອະນຸຍາດນຳເຂົ້ານັ້ນ;

6. ໃຫ້ກົມປູກຝັງ, ກົມແຜນການ, ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງວຽງຈັນ ແລະດ່ານປ້ອງກັນພືດຊາຍແດນ ເພີ່ມທະວີຄວາມເຂັ້ມງວດໃນການປະຕິບັດລະບອບສ່ອງແສງລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້; ມີຂໍ້ສະດວກ ແລະຫຍຸ້ງຍາກແນວໃດ ໃຫ້ລາຍງານການນຳກະຊວງກະສິກຳ ແລະປ່າໄມ້ ໄດ້ຮັບຊາບຢ່າງເປັນປົກກະຕິ ເພື່ອຫາວິທີແກ້ໄຂຢ່າງທັນການ;

7. ຄຳສັ່ງສະບັບນີ້ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້

ບ່ອນນຳສົ່ງ:

| | | |
|---|---|---|
| 1. | ຫ້ອງວ່າການສູນກາງພັກ | 01 ສະບັບ (ໃຊ້ຕາງລາຍງານ); |
| 2. | ຫ້ອງວ່າການລັດຖະບານ | 01 ສະບັບ (ໃຊ້ຕາງລາຍງານ); |
| 3. | ກະຊວງອຸດສາຫະກຳ ແລະການຄ້າ | 01 ສະບັບ (ເພື່ອຊາບ); |
| 4. | ສະພາການຄ້າ ແລະອຸດສາຫະກຳແຫ່ງຊາດ | 01 ສະບັບ (ເພື່ອແຈ້ງໃຫ້ນັກທຸລະກິດຊາບ); |
| 5. | ຫ້ອງການປະສານງານຜະລິດເປັນສິນຄ້າ ກປ | 01 ສະບັບ (ເພື່ອປະຕິບັດ); |
| 6. | ເກັບມ້ຽນ | 01 ສະບັບ. |

ກະຊວງກະສິກຳແລະປ່າໄມ້ ລັດຖະມົນຕີ

ວິໄລວັນ ພົມເຂ